# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 22 ເມສາ 2018 (4-22-2018)

---

## ຈົ່ງຕຽມຕົວຢືນຂຶ້ນ

ດົນປານໃດແລ້ວທີ່ທ່ານເຄີຍໄດ້ຢູ່ຖືກບ່ອນແລະຖືກເວລາພໍດີ?

**ຈຸດສຳຄັນໃນບົດຮຽນ**: ພຣະເຈົ້າຊົງກະທຳການຢູ່ຫຼັງຜ້າສາກຢູ່ຕລອດສເມີ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ປວັດສາດສ່ວນໃຫຍ່ເບິ່ງເໝືອນວ່າເຫດການຕ່າງໆເປັນສິ່ງເລັກນ້ອຍ.

- ຈະເປັນຢ່າງໃດຖ້າຫາກວ່າທ່ານ ຣິດເຈີດ ນິກເຊິນ ໄດ້ຍອມຟັງຄະນະທີ່ປຶກສາແລະໄດ້ພັກຜ່ອນກ່ອນຈະອອກໂທຣະທັດໃນການໂຕ້ວາທີກັບທ່ານ ຈອນ ເຄນເນດີ ໃນປີ 1963?
- ຈະເປັນຢ່າງໃດຖ້າຫາກວ່າທ່ານ ເຈໂຣ ຝອດ ຫາກບໍ່ເວົ້າຜິດໂດຍບັງເອີນໃນການກ່າວໂຕ້ຕອບຄຳຖາມກ່ຽວເຣື່ອງໂຄງການຕ່າງປະເທດຂອງທ່ານໃນການໂຕ້ວາທີຄັ້ງສຸດທ້າຍກັບທ່ານ ຈິມມີ ຄາເຕີ ໃນປີ 1976?

ສ່ວນໃຫຍ່ຊີວິດຂອງພວກເຮົາກໍເບິ່ງເໝືອນວ່າເປັນເຫດການນ້ອຍໆ. ມີຄົນຈຳນວນຫລວງຫລາຍເກັບກຳນາທີເຫຼົ່ານັ້ນວ່າເປັນ "ໂດຍບັງເອີນ," ແຕ່ວ່າມັນອາດຈະຫລາຍໄປກວ່ານັ້ນແມ່ນບໍ່? ພວກຄຣິສຕຽນສ່ວນຫຼາຍສາມາດເບິ່ງກັບຄືນເຖິງເຫດການສະເພາະເຈາະຈົງໃນຊີວິດຂອງພວກເຂົາເຈົ້າແລະເຫັນສິ່ງນັ້ນ, ເຖິງແມ່ນວ່າພວກເຂົາຈະບໍ່ໄດ້ໃສ່ໃຈກັບມັນໃນຂະນະນັ້ນກໍຕາມ, ພຣະຫັດຂອງພຣະເຈົ້າກໍຢູ່ເທິງພວກເຂົາແລະສະຖານະການຕ່າງໆຂອງພວກເຂົາເຈົ້າ.

ເອັສເທີສາມາດເປັນພະຍານໃຫ້ໄດ້. ເອັສເທີເປັນຍິງສາວຊາວຢິວທີ່ອາສັຍຢູ່ໃນຕ່າງແດນ, ແລະພຣະເຈົ້າຊົງທຳງານໃນຊີວິດຂອງນາງ, ໂດຍການເອົານາງໃຫ້ຢູ່ຖືກບ່ອນແລະຖືກກັບເວລາ. ນາງອາດຈະບໍ່ໄດ້ໃສ່ໃຈກັບມັນໃນຂະນະນັ້ນ, ແຕ່ວ່າພຣະເຈົ້າໄດ້ທຳງານຢູ່ຫຼັງຜ້າສາກເພື່ອໃຫ້ນາງຢູ່ໃນສະຖານທີ່ຂອງອຳນາດແລະຍິ່ງໃຫຍ່ສຳຄັນ.

**ພຣະຄັມພີກ່າວວ່າຢ່າງໃດ?** (ຈົ່ງເບິ່ງຕາມຂໍ້ 1, 2, 3 )

### ການສຶກສາພຣະຄັມພີ

**1. <u>ເອັສເທີ 2:5-7</u>**

*5 ຍັງມີຢິວຄົນນຶ່ງໃນຊູຊາເມືອງປ້ອມຊື່ ໂມດີຄາຍ ບຸດຢາອີຣ໌ ຜູ້ເປັນລູກຂອງຄີສ ຄົນເບັນຢາມິນ. 6. ຜູ້ຖືກກວາດຕ້ອນຈາກເຢຣູຊາເລັມໃນພູ່ຊະເລີຍທີ່ຖືກກວາດຕ້ອນໄປພ້ອມກັບເຢໂກນີຢາເຈົ້າຊີວິດຂອງຢູດາ ຜູ້ຊຶ່ງເນບຸກາດເນສຊາພຣະຣາຊາຂອງບາບີໂລນໄດ້ກວາດຕ້ອນໄປນັ້ນ. 7. ທ່ານໄດ້ລ້ຽງດູຮາດາຊາຄື ເອັສເທີລູກສາວລຸງຂອງທ່ານ ເພາະນາງບໍ່ມີພໍ່ແມ່ ຍິງສາວຄົນນີ້ຮູບງາມແລະໜ້າເບິ່ງ ເມື່ອບິດາມານດາຂອງນາງສິ້ນຊີວິດແລ້ວ ໂມດີຄາຍກໍຮັບນາງມາລ້ຽງເປັນລູກສາວ.*

ນາງເອສເທີເປັນຍິງສາວຊາວຢິວທີ່ຖືກນຳມາເປັນລູກບຸນທັມຂອງທ່ານໂມດີຄາຍຜູ້ຊຶ່ງເປັນພີ່ນ້ອງຂອງນາງເອງ. ການອາສັຍຢູ່ໃນຖິ່ນຕ່າງແດນໃຕ້ຜູ້ປົກຄອງທີ່ຜະເດັດການ, ຄືກະສັດອາຮາຊູເອຣູສ, ນາງໄດ້ຖືກບັງຄັບໃຫ້ປະກອບສ່ວນໃນການທີ່ເບິ່ງເໝືອນວ່າເປັນການແຂ່ງຂັນປະກວດນາງງາມ. ນາງມີທາງເລືອກສອງສາມທາງແລະເສລີພາບໃນ

ການເລືອກສອງສາມອັນ. ຂະນະທີ່ເຣື່ອງຂອງນາງຖືກເປີດເຜີຍ, ພວກເຮົາເປັນພະຍານໄດ້ວ່າເຣື່ອງລາວຂອງນາງແມ່ນຖືກຍົກຂຶ້ນໃຫ້ມີອຳນາດ.

ຍິງສາວຊາວຢິວໄດ້ໄປຕົກຢູ່ໃນຖິ່ນຕ່າງແດນໄດ້ແນວໃດ? ໃນປີ 586 ກ່ອນ ຄສ, ຊາວບາບີໂລນໄດ້ປົກຄອງກຸງເຢຣູຊາເລັມ, ໄດ້ເປັນເໝືອນດັ່ງຜູ້ປະກາດພຣະທັມໄດ້ທຳນວາຍເອົາໄວ້. ພຣະເຈົ້າໄດ້ເຮັດໃຫ້ຄຳສັນຍາຂອງພຣະອົງຄົບເຕັມໃນການຕັດສິນລົງໂທດປະເທດຢູດາທີ່ກະບົດ. ຕໍ່ຈາກນັ້ນ, ໃນປີ 539, ຊາວເປີເຊັຽໄດ້ຊະນະຊາວບາບີໂລນແລະໄດ້ອະນຸຍາດໃຫ້ຊາວຢິວທີ່ເປັນຊະເລີຍກັບຄືນເມືອບ້ານເກີດເມືອງນອນ. (ເອັສຣາ 1:1-4.) ຊາວຢິວຈຳນວນຫຼວງຫຼາຍໄດ້ກັບຕ່າວຄືນສູ່ບ້ານເມືອງເດີມ, ແຕ່ທ່ານໂມດີຄາຍແລະນາງເອັສເທີໄດ້ເລືອກຢູ່ໃນປະເທດເປີເຊັຽ.

ກ່ອນທີ່ພວກເຮົາຈະສຶກສາຕື່ມອີກກັບເຫດການຕ່າງໆໃນຊີວິດຂອງນາງເອັສເທີແລະທ່ານໂມດີຄາຍ,ໃຫ້ສັງເກດວ່າພຣະເຈົ້າກະທຳການໃນສິ່ງທີ່ກຳລັງເກີດຂຶ້ນນັ້ນ. ສຳລັບບາງຄົນ, ປະໂຍກນັ້ນອາດຈະປາກົດວ່າມັນແປກໆ ເພາະວ່າ, ມັນບໍ່ເໝືອນກັບພຣະຄຳໃນພຣະຄັມພີເຫຼັ້ມອື່ນໆ, ໃນພຣະທັມເອັສເທີບໍ່ມີຄຳເວົ້າເອີ່ຍເຖິງກ່ຽວກັບພຣະເຈົ້າເລີຍ ແມ່ນແຕ່ກົດບັນຍັດແລະຄຳໝັ້ນສັນຍາຂອງພຣະອົງກໍບໍ່ໄດ້ເອີ່ຍເຖິງ ແມ້ກະທັ້ງພຣະນາມຂອງພຣະອົງ! ແຕ່ວ່າ, ເຖິງວ່າມັນຈະຂາດພາສາທີ່ເປັນທີສດີທາງສາສນາກໍບໍ່ໄດ້ໝາຍຄວາມວ່າພຣະເຈົ້າໄດ້ຢູ່ຫ່າງໄກຫຼືບໍ່ມີການເຄື່ອນໄຫວເລີຍ. ພຣະເຈົ້າໄດ້ກະທຳການເພື່ອຮັກສາຄຳສັນຍາຕ່າງໆຂອງພຣະອົງເພື່ອຊ່ວຍໄພ່ພົນຂອງພຣະອົງໃຫ້ລອດພົ້ນ ແລະພຣະອົງໄດ້ຊົງໃຊ້ຄົນທີ່ເບິ່ງຄືວ່າຈະເຮັດຫຍັງບໍ່ໄດ້ໃນຂັ້ນຕອນຕ່າງໆນີ້.

| |
|---|
| ແມ່ນຫຍັງທີ່ກ່ຽວກັບສະຖານະການຕ່າງໆຂອງນາງເອັສເທີ ທີ່ດຶງດູດຄວາມສົນໃຈຂອງທ່ານ? |

ດັ່ງນັ້ນ, ຂະນະທີ່ພວກເຮົາຜ່ານເຂົ້າສູ່ພຣະທັມເອັສເທີແລະເຫັນສິ່ງທ້າທາຍຂອງທັງສອງຄືນາງເອັສເທີແລະທ່ານໂມດີຄາຍທີ່ໄດ້ປະເຊີນໜ້າຢູ່ນັ້ນ, ພວກເຮົາຈະໄດ້ຖືກເຕືອນວ່າມັນງ່າຍໃນການເຊື່ອພຣະເຈົ້າໃນທາງທິສດີ, ມັນອາດຈະເປັນການຍາກທີ່ຈະເຫັນພຣະຫັດຂອງພຣະອົງໃນຊີວິດທີ່ກຳລັງລົ້ມລຸກຄຸກຄານຢູ່ນັ້ນ. ແຕ່ວ່າພຣະເຈົ້າໄດ້ເອົາພວກເຮົາແຕ່ລະຄົນໄວ້ຕາມເວລາໃນປວັດສາດເພື່ອໃຫ້ເວົ້າເຖິງແລະເວົ້າຂ່າວປະເສີດອອກໄປເພື່ອແຜ່ຂຍາຍການຊົງໂຜດໃຫ້ພົ້ນຂອງພຣະອົງ, ແລະລຸກຢືນເພື່ອພຣະອົງໃນບ່ອນໃດກໍຕາມທີ່ມັນເປັນໄປໄດ້.

## 2. <u>ເອັສເຕີ 2:8-10</u>

*8ເມື່ອຮັບສັ່ງຈາກພຣະຣາຊາແລະຄຳປະກາດຂອງພຣະອົງປະກາດອອກໄປ ແລະເມື່ອເຂົາຮວບຮວມຍິງສາວທັງຫຼາຍເຂົ້າມາໃນຊູຊາເມືອງປ້ອມ ເອສເທີກໍຖືກນຳເຂົ້າມາໄວ້ໃນຣາຊສຳນັກຢູ່ໃນອາຣັກຂາຂອງເຮກັຍຜູ້ດູແລສະຕຣີ. 9. ຍິງນັ້ນເປັນທີ່ພໍໃຈເຂົາ ແລະນາງກໍເປັນທີ່ໂປດປານແກ່ເຂົາ ເຂົາຈຶ່ງຮີບຈັດຫາເຄື່ອງປະເທືອງຜິວ ແລະສ່ວນອາຫານຂອງນາງໃຫ້ນາງ ພ້ອມກັບສາວໃຊ້ທີ່ຄັດເລືອກແລ້ວເຈັດຄົນຈາກຣາຊສຳນັກ ແລ້ວກໍເລື່ອນນາງແລະສາວໃຊ້ຂອງນາງຂຶ້ນໄປຍັງສະຖານທີ່ດີທີ່ສຸດໃນຮາເຣັມ. 10. ເອັສເຕີບໍ່ໄດ້ບອກໃຫ້ຊາບເຖິງຊາດແລະຍາດຂອງນາງ ເພາະໂມດີຄາຍກຳຊັບນາງບໍ່ໃຫ້ໃຜຮູ້.*

ພຣະທັມເອສເທີເລີ້ມຕົ້ນດ້ວຍເຣື່ອງລາວການກະທຳຂອງກະສັດຕໍ່ຣາຊີນີ ວາຊະຕີແລະການເສັຽຕຳແໜ່ງຂອງນາງໃນເວລາຕໍ່ມາ. (ເບິ່ງ1:1-22.) ແຕ່ວ່າດຽວນີ້ກະສັດບໍ່ມີຣາຊີນີອີກແລ້ວ, ແລະທ່ານກໍໄດ້ຕັ້ງການປ່ຽນແປງໂດຍການເລືອກເອົາຍິງສາວຈາກກຸ່ມທີ່ໄດ້ຖືກຄັດເອົາໄວ້ແລ້ວນັ້ນ. ຜູ້ຍິງຮ້ອຍກວ່າຄົນໄດ້ຖືກແຍກອອກຈາກຄອບຄົວແລະຄຸ້ມເຂດຂອງພວກເຂົາເຈົ້າໃຫ້ຢູ່ໃນບ້ານພັກນາງສນົມຂອງກະສັດທີ່ຈັດແຍກໄວ້ຕ່າງຫາກ ແລະໃນນັ້ນກໍລວມທັງນາງເອັສເທີດ້ວຍ.

| |
|---|
| ເມື່ອໃດທີ່ທ່ານເຄີຍພົບຕົວທ່ານເອງວ່າທ່ານໄດ້ຖືກອອກນອກຂອບເຂດຄວາມສຸກໃຈຂອງຕົນເອງຢ່າງໝົດສິ້ນ? |

ນາງເອັສເທີໄດ້ເປັນທີ່ຖືກໃຈຂອງເຮກັຍ, ຜູ້ດູແລພວກນາງສນົມຂອງກະສັດ. ຈາກພວກຍິງສາວຮ້ອຍກວ່າຄົນນັ້ນ, ເປັນຫຍັງນາງເອັສເທີຈຶ່ງຖືກຕາກວ່າຍິງອື່ນໆ? ຂໍ້ທີ 7 ໄດ້ບອກພວກເຮົາວ່ານາງມີຮູບຮ່າງສວຍງາມ, ແຕ່ແນ່ນອນວ່າອີກຫຼາຍໆດ້ານໃນຄຸນສົມບັດຂອງນາງເຮັດໃຫ້ເປັນທີ່ໂປດປານຂອງເຮກັຍ.

ຢ່າໃຫ້ພວກເຮົາເບິ່ງຂ້າມພຣະຫັດອັນ "ນິດງຽບ" ຂອງພຣະເຈົ້າທີ່ກຳລັງກະທຳການຢູ່. ເນື້ອໃນໃຈຄວາມທັງໝົດຂອງພຣະທັມເອັສເຕີແມ່ນພຣະຫັດຂອງພຣະເຈົ້າທີ່ເບິ່ງບໍ່ເຫັນໃນການຊົງໃຊ້ທັງຊາຍແລະຍິງທີ່ມີຕຳໜ່ ໃນເວລາອັນເໝາະສົມເພື່ອຊ່ວຍໄພ່ພົນຂອງພຣະອົງໃຫ້ລອດພົ້ນ. ຊຶ່ງແມ່ນພຣະເຈົ້າທີ່ເຮັດໃຫ້ນາງເອັສເທີສວຍງາມພຽບພ້ອມດ້ວຍຄຸນສົມບັດທີ່ດີນັ້ນ, ແລະແມ່ນພຣະເຈົ້າມີໄດ້ອະນຸຍາດໃຫ້ນາງເອັສເທີໄດ້ຮັບຄວາມຊອບໃຈອັນພິເສດເພີ້ມຂຶ້ນໃນເວລານັ້ນສຳລັບເປົ້າໝາຍທີ່ນາງຍັງບໍ່ທັນເຂົ້າໃຈໄດ້ຢ່າງຄົບຖ້ວນເທື່ອ.

ທ່ານເຄີຍໄດ້ຕົກຢູ່ໃນກໍຣະນີທີ່ທ່ານບໍ່ໄດ້ຄາດຄິດເອົາໄວ້ກ່ອນບໍ່? ຊຶ່ງໄດ້ເກີດຂຶ້ນກັບພວກເຮົາທຸກໆຄົນໃນດ້ານໃດດ້ານນຶ່ງ:

- ວຽກການຖືກຍົກຍ້າຍໄປຣັດອື່ນ.
- ການຕັ້ງທ້ອງທີ່ບໍ່ "ຄາດຝັນ" ແລະເກີດລູກຜູ້ທີສາມ.
- ກຸ່ມສຶກສາພຣະຄັມພີໃນໂຮງຮຽນມັດທະຍົມຕົ້ນໄດ້ຜູ້ນຳຄົນໃໝ່ ຄືທ່ານເອງ.

ພວກເຮົາເຄີຍເປັນແບບນັ້ນ, ແຕ່ພວກເຮົາບໍ່ສົມຄວນທີ່ຈະເຫັນສະຖານະການອັນບໍ່ຄາດຝັນທັມມະດາຢ່າງນີ້; ສິ່ງເຫຼົ່ານີ້ແມ່ນໂອກາດທີ່ບໍ່ຄາດຝັນ! ບໍ່ມີສິ່ງໃດດອກທີ່ໄດ້ເກີດຂຶ້ນໃນຊີວິດຈະເຮັດໃຫ້ພຣະເຈົ້າສງົບສົນເທ. ພວກເຮົາສາມາດຕົກຢູ່ໃນການເຜີຕົວໂດຍການທ້າທາຍອັນໃໝ່, ຫຼືພວກເຮົາສາມາດເບິ່ງເຫັນສິ່ງເຫຼົ່ານັ້ນວ່າແມ່ນໂອກາດ ການນັດພົບກັບພຣະເຈົ້າຈາກເບື້ອງເທິງທີ່ພຣະອົງໄດ້ປະທານແກ່ພວກເຮົາ. ຕອນທຳອິດ, ພວກເຮົາອາດຈະບໍ່ຮູ້ຈັກວ່າ "ການປະຈົນພັຍ" ອັນໃໝ່ນີ້ຈະນຳພາໄປທີ່ໃດ, ແຕ່ວ່າພວກເຮົາສາມາດໄວ້ວາງໃຈຢ່າງແນ່ນອນໃນພຣະອົງຜູ້ສະຖິດຢູ່ກັບເຮົາຕລອດເວລາ.

ເມື່ອພວກເຮົາປາຖນາໃຫ້ພໍພຣະທັຍພຣະເຈົ້າ ບໍ່ວ່າພວກເຮົາຈະຕົກໃນທີ່ໃດກໍຕາມ ພຣະອົງຈະເປີດປະຕູທີ່ພວກເຮົາບໍ່ສາມາດວາດພາບພົດນັ້ນໄດ້. ໂອກາດຢູ່ທີ່ນັ້ນເພື່ອນຳພຣະກຽດມາສູ່ພຣະອົງໃນສະຖານະການຕ່າງໆຂອງພວກເຮົາແລະເຮັດໃນສິ່ງທີ່ຍິ່ງໃຫຍ່ສຳລັບພຣະອົງ.

## 3. <u>ເອັສເທີ 2:15-15</u>

*15 ເມື່ອເຖິງເວນຂອງເອັສເທີ ລູກສາວຂອງອາບີຮາອີນ ລຸງຂອງ ໂມດີຄາຍຜູ້ຊຶ່ງຮັບນາງໄວ້ເປັນລູກສາວ ຈະເຂົ້າເຝົ້າພຣະຣາຊາ ນາງບໍ່ໄດ້ຂໍສິ່ງໃດ ນອກຈາກສິ່ງທີ່ເຮກັຍຂັນທີຂອງພຣະຣາຊາດູແລຜູ້ຍິງແນະນຳ ຝ່າຍເອັສເທີເປັນທີ່ຖືກຕາທຸກຄົນທີ່ເຫັນນາງ. 16. ເມື່ອເຂົາພາເອັສເທີເຂົ້າໄປເຝົ້າກະສັດອາຮາຊູເອຣູສ ໃນພຣະຣາຊສຳນັກ ໃນເດືອນທີສິບຊຶ່ງເປັນເດືອນເຕເບທ ໃນປີທີເຈັດແຫ່ງຣັຊການຂອງພຣະອົງ. 17. ພຣະຣາຊາຊົງຮັກເອັສເທີຍິ່ງກວ່າຍິງອື່ນທັງສິ້ນ ແລະນາງໄດ້ຮັບພຣະກະຣຸນາໂປດປານໃນສາຍພຣະເນດຂອງພຣະອົງຫຼາຍກວ່າຍິງພົມມະຈາຣີທັງສິ້ນ ພຣະອົງຈຶ່ງຊົງສວມມົງກຸດເທິງຫົວຂອງນາງ ແລະຊົງຕັ້ງນາງໃຫ້ເປັນພຣະຣາຊີນີແທນວາຊະຕີ.*

ສີ່ປີໄດ້ຜ່ານພົ້ນໄປຫຼັງຈາກທີ່ກະສັດອາຮາຊູເອຣຸສໄດ້ປົດຕຳແໜ່ງຣາຊິນີວາຊະຕີແລະເພິ່ນໄດ້ແຕ່ງຕັ້ງນາງເອັສເທີໃຫ້ເປັນຣາຊິນີຄົນໃໝ່ຂອງເພິ່ນ. ລະຫວ່າງພາກສ່ວນນຶ່ງໃນຕອນນັ້ນ ພວກຍິງສາວເປັນຮ້ອຍໆໄດ້ລໍຄອຍດ້ວຍຄວາມບໍ່ແນ່ນອນ. ຍາມໃດເດຈຶ່ງຈະແມ່ນຜຽນເຮົາ? ເຮົາຈະເປັນທີ່ໂປດປານຂອງກະສັດຫຼືບໍ່? ເຮົາຈະກາຍເປັນຣາຊິນີບໍ່? ນາງເອັສເທີບາງທີກໍໄດ້ຕົກຢູ່ໃນຊ່ວງບໍ່ແນ່ນອນເຊັ່ນກັນ, ໃຫ້ເຄື່ອນທີ່ໄປຕາມຂັ້ນຕອນຈາກເດັກກຳພ້າຂ້າທາດຊາວຢີວເຖິງການເປັນນາງສນົມຂອງກະສັດອາຮາຊູເອຣູສຈົນເປັນຣາຊິນີຂອງປະເທດເປີເຊັຽ. ເຖິງປານນັ້ນ, ພວກຍິງສາວທັງປວງໃນເປີເຊັຽ, ເອັສເທີຢ່າງໜ້ອຍກໍໄດ້ມາສຸດທີ່ຣາຊວັງ. ນາງເປັນຄົນຢິວທີ່ບໍ່ມີນາມສະກຸນຫຼືບໍ່ມີສາຍພົວພັນທີ່ຈະຊຸກຍູ້ນາງໃຫ້ມີອຳນາດ. ແລະແລ້ວດຽວນີ້ນາງໄດ້ເປັນຣາຊີນີ ຢູ່ໃນຕຳແໜ່ງຂອງອິດທິພົນແລະໃຫ້ເປັນແຫຼ່ງທີ່ມາຂອງ

ສິ່ງຕ່າງໆເພື່ອຮັບໃຊ້ໄພ່ພົນຂອງພຣະເຈົ້າໃນທາງທີ່ນາງເອງກໍຍັງບໍ່ໄດ້ຄິດເຖິງເທື່ອ ພຣະເຈົ້າກະທຳການເຄື່ອນໄຫວເພື່ອໃຫ້ຄຳສັນຍາຫຼວງຫຼາຍຂອງພຣະອົງໃຫ້ຄົບເຕັມເພື່ອຊ່ວຍຊູໄພ່ພົນຂອງພຣະອົງ.

| |
|---|
| ພວກເຮົາຈະສົມທຽບຄວາມກົດດັນລະຫວ່າງຄວາມສັບສົນຂອງເຣື່ອງນາງເອັສເທີຈົນຮອດດຽວນີ້ແລະແຜນການທີ່ມີອຳນາດສູງສຸດຂອງພຣະເຈົ້າຢ່າງໃດ? |

ພຣະເຈົ້າກະທຳການແມ້ກະທັ້ງໃນສະຖານະການທີ່ບໍ່ດີເລີດກໍຕາມ. ພວກເຮົາບໍ່ສາມາດປະຕິເສດໄດ້ວ່າກະສັດອາຮາຊູເອຣຸສໄດ້ໃຊ້ການກະທຳທີ່ຜິດບາບໃນການຊອກຫາຣາຊິນີຄົນໃໝ່. ນາງເອັສເທີກໍເຂົ້າປະກອບສ່ວນໃນຂັ້ນຕອນທີ່ບໍ່ໃຫ້ກຽດການອອກແບບຂອງພຣະເຈົ້າສຳລັບເຣື່ອງເພດແລະການແຕ່ງງານ ມັນສຳຄັນຫຼາຍໃນການຈົດຈຳວ່າພຣະຄັມພີບັນທຶກເຫດການຫຼາຍໆ ຢ່າງຂອງປະຫວັດສາດ ຂະນະດຽວກັນກໍບໍ່ມີການສນັບສນຸນການປະພຶດທີ່ຜິດບາບອັນເຫັນໄດ້ຢ່າງແຈ່ມແຈ້ງໃນເຫດການເຫຼົ່ານັ້ນ. ເຖິງປານນັ້ນ, ພຣະເຈົ້າກໍຊົງກະທຳການຢູ່ສເມີ ແມ້ກະທັ້ງໃນໂລກທີ່ເຕັມໄປດ້ວຍຄວາມຜິດບາບ.

ແນ່ນອນວ່ານາງເອັສເທີຄົງບໍ່ໄດ້ຄາດຄິດເຖິງຜົນກະທົບອັນເຕັມສ່ວນຂອງມັນ, ແຕ່ວ່າພຣະເຈົ້າກໍຢູ່ເບື້ອງຫຼັງເຣື່ອງຂອງນາງ, ໂດຍການເອົານາງໄປໃສ່ບ່ອນທີ່ມີອິດທິພົນ. ຕຳແໜ່ງຂອງນາງບໍ່ພຽງແຕ່ເປັນຜົນປໂຍດສຳລັບນາງ; ມັນຍັງເປັນຜົນປໂຍດແກ່ຄົນຂອງນາງເອງ, ຄືຊາວຢິວ. ແລະທີ່ຍິ່ງໃຫຍ່ໄປກວ່ານັ້ນ, ກໍແມ່ນພວກເຮົາທັງປວງໄດ້ຮັບຜົນປໂຍດນຳດ້ວຍ, ສຳລັບເຊື້ອສາຍຄອບຄົວຂອງພຣະເຢຊູກໍໄດ້ອອກມາຈາກຄົນທີ່ນາງໄດ້ຊ່ວຍກູ້ເອົາໄວ້ນັ້ນ.

| |
|---|
| ປັດຈຸບັນນີ້ພຣະເຈົ້າເອົາຕຳແໜ່ງໃດໃຫ້ແກ່ທ່ານໃນການເປັນຜູ້ມີອິດທິພົນ? |

## ນຳໃຊ້ໃນຊີວິດ

ພຣະເຈົ້າຊົງກະທຳການແມ້ແຕ່ຢູ່ເບື້ອງຫຼັງ. ທ່ານຈະເຮັດຫຍັງກັບຄວາມຈິງອັນນີ້? ຈົ່ງເລືອກເອົາການນຳໃຊ້ໃນຊີວິດອັນນຶ່ງໃນຂ້າງລຸ່ມນີ້:

- **ເບິ່ງຍ້ອນກັບຫຼັງ.** ເບິ່ງຜົນສະທ້ອນໃນການເດີນກັບພຣະຄຣິດຂອງທ່ານ. ແມ່ນຫຍັງຄືເຫດການຕ່າງໆທີ່ພຣະເຈົ້າໄດ້ໃຊ້ໃນອະດີດເພື່ອດຶງທ່ານເຂົ້າຫາພຣະອົງ ຫຼືນຳທ່ານໃຫ້ໃກ້ຊິດກັບພຣະອົງ? ພິຈາຣະນາເບິ່ງເຫດການເຫຼົ່ານັ້ນວ່າອາດຈະເບິ່ງເໝືອນວ່າມັນເປັນຂອງເລັກນ້ອຍຫຼືບໍ່ມີຜົນຕາມມາໃນເວລານັ້ນ. ຂອບພຣະຄຸນພຣະເຈົ້າສຳລັບກິຈການອັນສັດຊື່ຂອງພຣະອົງໃນຊີວິດຂອງທ່ານ.
- **ຈົດໄວ້.** ຂຽນພອນສວັນຕ່າງໆ, ຄວາມຊຳນານຕ່າງໆ, ຫຼື ຄຸນສົມບັດທີ່ໄດ້ປະທານແກ່ທ່ານ. ທວງຖາມພຣະເຈົ້າໃຫ້ສະແດງແກ່ທ່ານວ່າທ່ານຈະໃຊ້ສິ່ງເຫຼົ່ານັ້ນຢ່າງໃດເພື່ອຖວາຍກຽດແກ່ພຣະອົງ. ເຖິງແມ່ນວ່າໃນສະຖານະການທີ່ບໍ່ດີ.
- **ໜູນໃຈຄົນອື່ນ.** ທ່ານອາດຈະຮູ້ຈັກບາງຄົນທີ່ກຳລັງປະເຊີນໜ້າກັບສະຖານະການທີ່ເໜືອການຄວບຄຸມຂອງລາວ. ສເນີຕົວທ່ານເຂົ້າສນັບສນຸນແລະໃຫ້ຄຳໜູນໃຈ. ຊ່ວຍຄົນນັ້ນໃຫ້ເຫັນການຊົງສະຖິດຢູ່ນຳຂອງພຣະເຈົ້າ ແລະພຣະອົງຊົງກະທຳການຢູ່ ເຖິງແມ່ນວ່າຍັງບໍ່ເຫັນຫຼັກຖານເທື່ອກໍຕາມ.

ເບື້ອງຫຼັງສ່ວນຕົວຂອງທ່ານຄົງບໍ່ຕ້ອງເດົາກໍໄດ້ວ່າມັນເຕັມດ້ວຍທາງແຍກຫຼາຍໆເສັ້ນໃນຫົນທາງເດີນບ່ອນທີ່ສິ່ງຕ່າງໆອາດສາມາດເປັນໄປໃນທາງກົງກັນຂ້າມ. ແຕ່ວ່າມັນເປັນສິ່ງທີ່ດີທີ່ຮູ້ຈັກວ່າພວກເຮົາມີພຣະເຈົ້າ ອົງຊົງກະທຳການໃຫ້ສິ່ງຕ່າງໆກາຍເປັນດີສຳລັບພວກເຮົາ ແລະສະງ່າຣາສີຂອງພຣະອົງ!

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** www.lsbf.org **ແປໂດຍ** PA